ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ: **2352** /ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ **15/08/2016**

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ທ່ານ ຜູ້ອຳນວຍການໃຫຍ່ ບໍລິສັດຕະຫຼາດຫຼັກຊັບລາວ ຈຳກັດ

ທີ່ນັບຖື

ເລື້ອງ: ແຈ້ງມະຕິກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1/2016.

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍລະບຽບການລາຍງານ ແລະການເປີດເຜີຍຂໍ້ມູນ ສະບັບເລກທີ 007/ຄຄຊ, ລົງວັນທີ 3 ເມສາ 2014.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 22/LSX, ລົງວັນທີ 07 ມັງກອນ 2011.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ("ບໍລິສັດ") ຂໍຖືເປັນກຽດແຈ້ງມະຕິ ຂອງກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2016, ວັນທີ 12/08/2016 ດັ່ງມີລາຍລະອຽດລຸ່ມນີ້:

ວາລະທີ 1. ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2015. ກອງປະຊຸມໄດ້ມີມະຕິ ດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- ເຫັນດີຈຳນວນ 1.541.718.446 ສຽງ, ເທົ່າກັບ 99,99 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ 300 ສຽງ ເທົ່າກັບ 0,00002 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 2. ອະນຸມັດການແຕ່ງຕັ້ງທ່ານ ນາງ ລັດຕະນາ ປະທຸມວັນ ເປັນຜູ້ອຳນວຍການໃຫຍ່ຄົນໃໝ່ ເພື່ອສືບຕໍ່ປະຕິບັດໜ້າທີ່ບໍລິຫານບໍລິສັດ ແທນຜູ້ອຳນວຍການໃຫຍ່ຜູ້ເກົ່າ ແລະ ອະນຸມັດແຕ່ງຕັ້ງ ທ່ານ ບຸນອຸ້ມ ສີວັນເພັງ ຜູ້ອຳນວຍການບໍລິສັດ/ຜູ້ອຳນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ ເປັນຮອງປະທານສະພາບໍລິຫານບໍລິສັດ ປ່ຽນແທນ ທ່ານ ສີສະຫວາດ ທິຣະວົງ ຮອງປະທານສະພາບໍລິຫານຜູ້ເກົ່າທີ່ໄປຮັບໜ້າທີ່ໃໝ່ ແລະ ອະນຸມັດຫລຸດຈຳນວນຜູ້ອຳນວຍການຂອງບໍລິສັດ ຈາກ 10 ທ່ານ ເປັນ 09 ທ່ານ. ແລະກຳນົດຜູ້ມີອຳນາດໃນການລົງລາຍເຊັນສັນຍາຜູກພັນບໍລິສັດດັ່ງນີ້:

ກ). ໃຫ້ປະທານສະພາບໍລິຫານ, ຮອງປະທານສະພາບໍລິຫານ ຫລື ຜູ້ອຳນວຍການໃຫຍ່ ເປັນຜູ້ມີອຳນາດໃນການລົງລາຍເຊັນຜູກພັນບໍລິສັດ ປະທັບກາບໍລິສັດແຕ່ພຽງຜູ້ດຽວ ຫລື;

ຂ). ໃຫ້ຜູ້ອຳນວຍການທ່ານອື່ນ ສອງທ່ານລົງລາຍເຊັນຮ່ວມກັນ ແລະ ປະທັບກາບໍລິສັດ.

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ. ນ. 2392
ໂທລະສັບ: (856-21) 316142 ແຟັກ: (856-21) 316141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ກອງປະຊຸມໄດ້ມີມະຕິ ດ້ວຍຄະແນນສຽງທັງໝົດຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- ເຫັນດີຈຳນວນ 1.541.730.246 ສຽງ, ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ວາລະທີ 3. ອະນຸມັດການແຕ່ງຕັ້ງຮອງຜູ້ອຳນວຍການໃຫຍ່ ເພີ່ມອີກສອງທ່ານ ຄື:

(1). ທ່ານ ທອງເພັດ ດ້ວງເງິນ ເປັນຮອງຜູ້ອຳນວຍການໃຫຍ່ ຮັບຜິດຊອບສາຍງານພັດທະນາທຸລະກິດ;

(2). ທ່ານ ພູມມີ ເນຕິບັນດິດ ເປັນຮອງຜູ້ອຳນວຍການໃຫຍ່ ຮັບຜິດຊອບສາຍງານຜະລິດ;

ກອງປະຊຸມໄດ້ມີມະຕິ ດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- ເຫັນດີຈຳນວນ 1.541.646.913 ສຽງ, ເທົ່າກັບ 99,99 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

- ບໍ່ເຫັນດີຈຳນວນ 83.333 ສຽງ, ເທົ່າກັບ 0,00541 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ

ວາລະທີ 4. ອະນຸມັດການດັດແກ້ກົດລະບຽບຂອງບໍລິສັດ ມາດຕາ 9 ວ່າດ້ວຍຜູ້ອຳນວຍການ ແລະມາດຕາ 12 ວ່າດ້ວຍສະພາບໍລິຫານ ແລະ ລວມທັງນິຕິກຳຕ່າງໆ ທີ່ກ່ຽວຂ້ອງ ເປັນຕົ້ນແມ່ນ ໃບທະບຽນວິສາຫະກິດ ແລະສັນຍາສ້າງຕັ້ງຂອງບໍລິສັດ ແລະອື່ນໆ. ແລະມອບອຳນາດໃຫ້ ທ່ານ ຜູ້ອຳນວຍການໃຫຍ່ ແລະ/ຫຼື ບຸກຄົນທີ່ໄດ້ຮັບມອບໝາຍຈາກບຸກຄົນດັ່ງກ່າວເປັນຜູ້ມີອຳນາດ ໃນການດັດແກ້ເນື້ອໃນກົດລະບຽບຂອງບໍລິສັດ ແລະ ລວມທັງນິຕິກຳຕ່າງໆ ທີ່ກ່ຽວຂ້ອງ ເປັນຕົ້ນແມ່ນ ໃບທະບຽນວິສາຫະກິດ ແລະ ສັນຍາສ້າງຕັ້ງຂອງບໍລິສັດ ແລະ ອື່ນໆ, ຕາມທີ່ເຈົ້າໜ້າທີ່ທະບຽນວິສາຫະກິດ ແລະ/ຫຼືເຈົ້າໜ້າທີ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ລວມທັງຕະຫຼາດຫຼັກຊັບລາວ ມີຄຳແນະນຳ ແລະ/ຫຼື ຄຳສັ່ງໃຫ້ດັດແກ້.

ກອງປະຊຸມໄດ້ມີມະຕິ ດ້ວຍຄະແນນສຽງຫລາຍກວ່າສອງສ່ວນສາມ(2/3) ຂອງຜູ້ເຂົ້າຮ່ວມກອງປະຊຸມ ແລະ ຖືຮຸ້ນລວມກັນຫລາຍກວ່າແປດສິບ (80%) ສ່ວນຮ້ອຍຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ, ດັ່ງນີ້:

(ກ) ຈຳນວນຄົນ ຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ:

1. ເຫັນດີ 706 ທ່ານ, ເທົ່າກັບ 99,86 ສ່ວນຮ້ອຍ ທຽບໃສ່ຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.
2. ບໍ່ເຫັນດີ 01 ທ່ານ, ເທົ່າກັບ 0,14 ສ່ວນຮ້ອຍ ທຽບໃສ່ຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

(ຂ) ຈຳນວນຮຸ້ນ (ສຽງ) ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ:

1. ເຫັນດີ 1.541.733.946 ຮຸ້ນ (ສຽງ), ເທົ່າກັບ 91,80 ສ່ວນຮ້ອຍ ທຽບໃສ່ຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ.

2. ບໍ່ເຫັນດີ 1.000 ຮຸ້ນ (ສຽງ), ເທົ່າກັບ 0,00006 ສ່ວນຮ້ອຍ ທຽບໃສ່ຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ.

ວາລະທີ 5. ອະນຸມັດການອອກ ແລະ ສະເໜີຂາຍຮຸ້ນກູ້ຂອງບໍລິສັດ ເປັນສະກຸນເງິນໂດລາສະຫະລັດ ປະມານ 300-350 ລ້ານໂດລາສະຫະລັດ, ລາຍລະອຽດມີດັ່ງນີ້:

ຈຸດປະສົງ: ເພື່ອລົງທຶນໃນໂຄງການເຂື່ອນໄຟຟ້າປາກແບ່ງ ແລະ ໂຄງການເຂື່ອນໄຟຟ້ານ້ຳເທີນ 1. ນອກຈາກນີ້, ຍັງມີການລົງທຶນໃນໂຄງການພາກຂະຫຍາຍ ຂອງເຂື່ອນໄຟຟ້າເຊເສັດ 2, ໂຄງການພາກຂະຫຍາຍຂອງເຂື່ອນໄຟຟ້າເຊລະບໍ, ໂຄງການໄຟຟ້າເສງຕາເວັນ, ໂຄງການເຂື່ອນໄຟຟ້ານ້ຳດິກ, ໂຄງການສ້ອມແປງໃຫຍ່ເຂື່ອນໄຟຟ້າເຊເສັດ 1-2, ໂຄງການສ້ອມແປງໃຫຍ່ເຂື່ອນໄຟຟ້ານ້ຳມັງ 3, ແລະລາຍຈ່າຍພາກການເງິນ ຂອງໂຄງການເຂື່ອນໄຟຟ້ານ້ຳພູນ ແລະ ໂຄງການເຂື່ອນໄຟຟ້ານ້ຳບີ ແລະ/ຫຼື ເພື່ອເປັນທຶນໝຸນວຽນຈຳນວນໜຶ່ງໃນບໍລິສັດ.

ປະເພດຂອງຮຸ້ນກູ້: ຮຸ້ນກູ້ (ບໍ່ມີການຄ້ຳປະກັນ).

ອັດຕາດອກເບ້ຍ: ອັດຕາທີ່ເໝາະສົມຂຶ້ນຢູ່ກັບຜົນການຈັດອັນດັບຄວາມໜ້າເຊື່ອຖືຂອງບໍລິສັດ ແລະ ສະພາວະຕະຫຼາດໃນຂະນະທີ່ອອກ ແລະ ສະເໜີຂາຍຮຸ້ນກູ້ໃນແຕ່ລະຄັ້ງ.

ອາຍຸຂອງຮຸ້ນກູ້: ຕາມແຜນການນຳໃຊ້ທຶນ ແລະສະພາບຂອງຕະຫລາດໃນຂະນະທີ່ສະເໜີຂາຍ.

ການສະເໜີຂາຍ: ສະເໜີຂາຍຮຸ້ນກູ້ໃນຄັ້ງດຽວເຕັມຈຳນວນເງິນ ໂດຍສະເໜີຂາຍຢູ່ຕ່າງປະເທດ ໃຫ້ແກ່ຜູ້ລົງທຶນທົ່ວໄປ ແລະ/ຫຼື ສະເໜີຂາຍໃຫ້ແກ່ນັກລົງທຶນໂດຍສະເພາະເຈາະຈົງ ແລະ/ຫຼື ສະເໜີຂາຍແກ່ນັກລົງທຶນລາຍໃຫຍ່ ແລະ/ຫຼື ຜູ້ລົງທຶນສະຖາບັນໃນຕ່າງປະເທດ, ໂດຍປະຕິບັດຕາມກົດລະບຽບທີ່ກ່ຽວຂ້ອງ ແລະມີຜົນບັງຄັບໃນເວລາທີ່ອອກ ແລະ ສະເໜີຂາຍຮຸ້ນກູ້.

ແລະມອບອຳນາດໃຫ້ສະພາບໍລິຫານບໍລິສັດ ແລະ/ຫລື ບຸກຄົນທີ່ຖືກມອບໝາຍຈາກສະພາບໍລິຫານ ໃຫ້ມີອຳນາດໃນການເຈລະຈາຕົກລົງໃນສັນຍາ ແລະ ເອກະສານຕ່າງໆທີ່ກ່ຽວຂ້ອງລວມເຖິງການດຳເນີນການໃດໆ ອັນຈຳເປັນ ແລະກ່ຽວຂ້ອງກັບການອອກ ແລະ ສະເໜີຂາຍຮຸ້ນກູ້ດັ່ງກ່າວ ເພື່ອໃຫ້ເປັນໄປຕາມທີ່ກົດໝາຍກຳນົດ ເຊິ່ງລວມເຖິງແຕ່ບໍ່ຈຳກັດພຽງການພິຈາລະນາກຳນົດເງື່ອນໄຂ ແລະລາຍລະອຽດອື່ນໆ ຂອງຮຸ້ນກູ້ທີ່ຈະອອກໃນຄັ້ງນີ້ ເຊັ່ນ: ປະເພດຮຸ້ນກູ້, ອາຍຸຂອງຮຸ້ນກູ້, ມູນຄ່າຮຸ້ນກູ້, ອັດຕາດອກເບ້ຍ, ໄລຍະເວລາໃນການອອກ ແລະ ສະເໜີຂາຍ, ວິທີການຈັດສັນ, ວິທີການສະເໜີຂາຍລາຍລະອຽດ ການສະເໜີຂາຍໃນຕະຫຼາດສຳຮອງຂອງຮຸ້ນກູ້, ການຂໍອະນຸຍາດຈາກໜ່ວຍງານທີ່ກ່ຽວຂ້ອງ, ລວມເຖິງການກະກຽມຕິດຕໍ່ໃຫ້ຂໍ້ມູນ ການຍື່ນເອກະສານທີ່ກ່ຽວຂ້ອງ ຕໍ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ສະຖາບັນຈັດອັນດັບຄວາມໜ້າເຊື່ອຖື ແລະ/ຫຼື ໜ່ວຍງານໃດທີ່ກ່ຽວຂ້ອງກັບການອອກ ແລະ ສະເໜີຂາຍຮຸ້ນກູ້ດັ່ງກ່າວ, ການແຕ່ງຕັ້ງຜູ້ຈັດຈຳໜ່າຍ ແລະ/ຫຼື ຜູ້ຮັບປະກັນການຈຳໜ່າຍ ແລະ/ຫຼື ທີ່ປຶກສາແລະຜູ້ທີ່ກ່ຽວຂ້ອງຕ່າງໆ ການ

ແຕ່ງຕັ້ງຕົວແທນຜູ້ຖືຮຸ້ນກູ້ ແລະ ຕະຫຼອດຈົນໃຫ້ມີອຳນາດດຳເນີນການ ຂໍອະນຸຍາດຕໍ່ໜ່ວຍງານທີ່ກ່ຽວຂ້ອງ ລວມເຖິງ ການເຂົ້າເຈລະຈາ ຕົກລົງ, ລົງນາມໃນເອກະສານ ແລະສັນຍາຕ່າງໆ ທີ່ກ່ຽວຂ້ອງ ແລະມີອຳນາດໃນການດຳເນີນການໃດໆ ຕາມທີ່ຈຳເປັນ ແລະ ກ່ຽວຂ້ອງກັບການອອກຮຸ້ນກູ້ໃນຄັ້ງນີ້ທຸກປະການ.

ກອງປະຊຸມໄດ້ມີມະຕິ ດ້ວຍຄະແນນສຽງຫລາຍກວ່າສອງສ່ວນສາມ(2/3) ຂອງຜູ້ເຂົ້າຮ່ວມກອງປະຊຸມ ແລະ ຖືຮຸ້ນລວມກັນຫລາຍກວ່າແປດສິບ (80%) ສ່ວນຮ້ອຍຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ, ດັ່ງນີ້:

(ກ) ຈຳນວນຄົນຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ:

1. ເຫັນດີ 701 ທ່ານ, ເທົ່າກັບ 99,15 ສ່ວນຮ້ອຍ ທຽບໃສ່ຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.
2. ບໍ່ເຫັນດີ 6 ທ່ານ, ເທົ່າກັບ 0,85 ສ່ວນຮ້ອຍ ທຽບໃສ່ຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ

(ຂ) ຈຳນວນຮຸ້ນ (ສຽງ) ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ :

1. ເຫັນດີ 1.541.723.176 ຮຸ້ນ (ສຽງ), ເທົ່າກັບ 91,80 ສ່ວນຮ້ອຍ ທຽບໃສ່ຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ.

2. ບໍ່ເຫັນດີ 11.770 ຮຸ້ນ (ສຽງ), ເທົ່າກັບ 0,0007 ສ່ວນຮ້ອຍ ທຽບໃສ່ຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ.

ຮຽນມາຍັງທ່ານເພື່ອຊາບ ແລະໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືເປັນຢ່າງສູງ,
ຜູ້ອຳນວຍການໃຫຍ່

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ລັດຕະນາ ປະທຸມວັນ